ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ 238 /ພກພ
ນະຄອນຫຼວງວຽງຈັນ, ວັນທີ 11 JUN 2025

ໜັງສືແຈ້ງການ

ຮຽນ: ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ການຂະຫຍາຍເວລາການໂຈະການຊື້ ຂາຍຮຸ້ນ ພກພ ຊົ່ວຄາວ ອີງຕາມ ໜັງສືແຈ້ງການການເພີ່ມເຕີມ ຂອງ ຕລຊລ ສະບັບເລກທີ: 865/ຕລຊລ ລົງວັນທີ: 11 ມິຖຸນາ 2025

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນມາຍັງບັນດາທ່ານຜູ້ຖືຮຸ້ນ ຂອງ ພກພ ຊາບວ່າການໂຈະການຊື້ຂາຍ ຮຸ້ນ ພກພ ຊົ່ວຄາວ ໄດ້ມີການຂະຫຍາຍເວລາ ຈາກກຳນົດເດີມ 5 ວັນ ມາເປັນ 7 ວັນ ເຊິ່ງ ຈະເລີ່ມແຕ່ວັນທີ 05-06 ແລະ 09-13 ມິຖຸນາ 2025. ແລະ ຈະກັບມາເປີດການ ຊື້-ຂາຍ ຮຸ້ນ ພກພ ປົກກະຕິ ໃນວັນທີ 16 ມິຖຸນາ 2025.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ
ພູສີກໍ່ສ້າງ ແລະ ພັດທະນາ
ມະຫາຊົນ
Phousy Construction and Development Public Company
ນະຄອນ ຫຼວງ ວຽງຈັນ

ແພງ ດວງເງິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕລຊລ
ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 865/ຕລຊລ
ນະຄອນຫຼວງວຽງຈັນ, ວັນທີ 11 JUN 2025

ແຈ້ງການ

ຮຽນ: ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ນັບຖື,
ເລື່ອງ: ແຈ້ງເພີ່ມເຕີມກ່ຽວກັບການດຳເນີນການປ່ຽນແປງມູນຄ່າກຳນົດ.

- ອີງຕາມ ລະບຽບວ່າດ້ວຍການດຳເນີນຕະຫຼາດ, ເລກທີ 10/ຕລຊລ, ລົງວັນທີ 19 ທັນວາ 2018;
- ອີງຕາມ ແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 382/ຕລຊລ, ລົງວັນທີ 26 ມີນາ 2025;
- ອີງຕາມ ແຈ້ງຜົນການທົບທວນເອກະສານກ່ຽວກັບການປ່ຽນແປງມູນຄ່າກຳນົດ, ເລກທີ 769/ພກພ, ລົງວັນທີ 27 ພຶດສະພາ 2025.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ຜ່ານການຄົ້ນຄວ້າ ແລະ ດຳເນີນການຕົວຈິງ ເພື່ອຮັບປະກັນການຊື້ ຂາຍຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ພາຍຫຼັງການປ່ຽນແປງມູນຄ່າກຳນົດ. ຕລຊລ ມີຄວາມຈຳເປັນຂະຫຍາຍໄລຍະເວລາໂຈະການຊື້ ຂາຍຮຸ້ນຂອງ ພກພ ຈາກເດີມ 05 ວັນຊື້ ຂາຍ ມາເປັນ 07 ວັນຊື້ ຂາຍ ຊຶ່ງຈະເລີ່ມແຕ່ **ວັນທີ 05-06 ແລະ 09-13 ມິຖຸນາ 2025**. ສະນັ້ນ, ເພື່ອໃຫ້ຜູ້ລົງທຶນຮັບຊາບຂໍ້ມູນຢ່າງທົ່ວເຖິງ ສະເໜີໃຫ້ ພກພ ເປີດເຜີຍຂໍ້ມູນເພີ່ມຕື່ມກ່ຽວກັບການຂະຫຍາຍໄລຍະເວລາໂຈະການຊື້ ຂາຍດັ່ງກ່າວ ຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງ ຕລຊລ ພາຍໃນວັນທີ **11 ມິຖຸນາ 2025**.

ດັ່ງນັ້ນ, ຕລຊລ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງຕາມໃນການຈັດຕັ້ງປະຕິບັດ.

ຜູ້ອຳນວຍການຝ່າຍດຳເນີນງານ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ຊາງ ຍອສ ລີ

ຜູ້ປະສານງານ:
ນ. ພອນທິບ ສຸກວິໄຊ, ເບີໂທ 020 5530 2459
ນ. ສຸນິດາ ພະລາງວັນ, ເບີໂທ 020 55082424